**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຄະນະກຳມະການລະດັບຊາດ ປັບປຸງລັດຖະທຳມະນູນ

ຄະນະປະຈຳການ ເລກທີ 67 /ຄລຊ

ນະຄອນຫຼວງວຽງຈັນ, ວັນທີ 18 ກໍລະກົດ 2024

# ຄຳຖາມເຈາະຈົ້ມ
# ປະກອບຄວາມເຫັນ ຕໍ່ການປະເມີນຜົນການຈັດຕັ້ງປະຕິບັດລັດຖະທຳມະນູນ
# ແລະ ການສະເໜີປັບປຸງລັດຖະທຳມະນູນ ປີ 2015
# (ສຳລັບທົ່ວໄປ)

1. ການຈັດຕັ້ງປະຕິບັດລັດຖະທຳມະນູນ ໃນໄລຍະເກືອບ 10 ປີ ທີ່ຜ່ານມາ (2015-2025) ມີດ້ານດີ, ດ້ານອ່ອນ ແນວໃດແດ່? ຍ້ອນເຫດຜົນອັນໃດ ແລະ ຄວນແກ້ໄຂແນວໃດ? ໃນນີ້:

– ການຜັນຂະຫຍາຍລັດຖະທຳມະນູນ ເປັນກົດໝາຍ ມີດ້ານດີ, ດ້ານອ່ອນ ຄືແນວໃດ? ຍ້ອນສາເຫດຕົ້ນຕໍໃດ ແລະ ຄວນຈະແກ້ໄຂແນວໃດ?

– ການໂຄສະນາ ເຜີຍແຜ່ ລັດຖະທຳມະນູນ ຕິດພັນກັບການສ້າງສະຕິເຄົາລົບ ແລະ ປະຕິບັດລັດຖະທຳມະນູນ ມີດ້ານດີ, ດ້ານອ່ອນແນວໃດ? ຍ້ອນສາເຫດຕົ້ນຕໍໃດ ແລະ ຄວນແກ້ໄຂແນວໃດ?

– ການປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ຕົວຈິງຢູ່ໃນຂົງເຂດຕ່າງໆ (ຂົງເຂດການເມືອງ-ການປົກຄອງ, ຂົງເຂດເສດຖະກິດ-ສັງຄົມ, ຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຂົງເຂດການຕ່າງປະເທດ) ມີດ້ານດີ, ດ້ານອ່ອນແນວໃດ? ຍ້ອນສາເຫດຕົ້ນຕໍໃດ ແລະ ຄວນແກ້ໄຂແນວໃດ?

– ການປະຕິບັດສິດ ແລະ ພັນທະຂອງພົນລະເມືອງລາວ ມີດ້ານດີ, ດ້ານອ່ອນແນວໃດ? ຍ້ອນສາເຫດຕົ້ນຕໍໃດ ແລະ ຄວນແກ້ໄຂແນວໃດ ?

2. ຜ່ານການຈັດຕັ້ງປະຕິບັດລັດຖະທຳມະນູນ ປີ 2015 ເປັນເວລາ 9 ປີ ທີ່ຜ່ານມາ ທ່ານເຫັນວ່າ ມີໝວດ, ມາດຕາ ຫຼື ບົດບັນຍັດໃດຂອງລັດຖະທຳມະນູນ ສະເໜີໃຫ້ປັບປຸງ ຫຼື ເພີ່ມໃໝ່ແນວໃດແດ່? ເຊັ່ນ:

- ໝວດທີ 1: ລະບອບການເມືອງ ແຕ່ມາດຕາ 1-12;
- ໝວດທີ 2 ລະບອບເສດຖະກິດ ແລະ ສັງຄົມ ແຕ່ມາດຕາ 13-30;
- ໝວດທີ 3 ການປ້ອງການຊາດ-ປ້ອງກັນຄວາມສະຫງົບ ແຕ່ມາດຕາ 31-33;
- ໝວດທີ 4 ສິດ ແລະ ພັນທະຂອງພົນລະເມືອງ ແຕ່ມາດຕາ 34-51;
- ໝວດທີ 5 ສະພາແຫ່ງຊາດ ແຕ່ມາດຕາ 52-64;
- ໝວດທີ 6 ປະທານປະເທດ ແຕ່ມາດຕາ 65-68;
- ໝວດທີ 7 ລັດຖະບານ ແຕ່ມາດຕາ 69-75;
- ໝວດທີ 8 ສະພາປະຊາຊົນທ້ອງຖິ່ນ ແຕ່ມາດຕາ 76-84;
- ໝວດທີ 9 ການປົກຄອງທ້ອງຖິ່ນ ແຕ່ມາດຕາ 85-89;
- ໝວດທີ 10 ສານປະຊາຊົນ ແລະ ອົງການໄອຍະການປະຊາຊົນ ແຕ່ມາດຕາ 90-103;

– ໝວດທີ 11 ອົງການກວດສອບແຫ່ງລັດ ແຕ່ມາດຕາ 104-107;

– ໝວດທີ 12 ຄະນະກຳມະການເລືອກຕັ້ງ ແຕ່ມາດຕາ 108-109;

– ໝວດທີ 13 ພາສາ, ອັກສອນ, ເຄື່ອງໝາຍຊາດ, ທຸງຊາດ, ເພງຊາດ, ວັນຊາດ, ສະກຸນເງິນ ແລະ ນະຄອນຫຼວງ ແຕ່ມາດຕາ 110-116;

– ໝວດທີ 14 ບົດບັນຍັດສຸດທ້າຍ ແຕ່ມາດຕາ 117-119.

3. ທ່ານມີຄວາມເຫັນແນວໃດ ຕໍ່ການກຳນົດບັນຫາສຳຄັນລຸ່ມນີ້ ເຂົ້າໃສ່ເນື້ອໃນຂອງລັດຖະທຳມະນູນ ສະບັບປັບປຸງໃໝ່ນີ້ ຄື:

– ບັນຫາບົດບາດນຳພາຂອງພັກ ຈະຮັກສາໄວ້ຄືເກົ່າວ່າ "ເປັນແກນນຳໃນລະບົບການເມືອງ" ຫຼື ຄວນລະບຸໄວ້ຢ່າງຈະແຈ້ງ ບົດບາດນຳພາຂອງພັກເປັນມາດຕາໜຶ່ງ ໃນໝວດວ່າດ້ວຍລະບອບການເມືອງ?

– ບັນຫາຈຸດໝາຍສັງຄົມນິຍົມ ຄວນກຳນົດໄວ້ຢູ່ໃນໝວດລະບອບການເມືອງບໍ່ ?

– ບັນຫາເສດຖະກິດເອກະລາດເປັນເຈົ້າຕົນເອງ ຄວນກຳນົດໄວ້ຢູ່ໃນໝວດເສດຖະກິດບໍ່ ?

– ບັນຫາວຽກງານກວດກາແຫ່ງລັດ ຄວນກຳນົດໄວ້ໃນລັດຖະທຳມະນູນບໍ່?

– ບັນຫາການສ້າງຕັ້ງອົງການປົກຄອງທ້ອງຖິ່ນຂັ້ນຕາແສງ ຄວນກຳນົດແນວໃດ?

ຄວາມເຫັນຕໍ່ຄຳຖາມຕ່າງໆດັ່ງກ່າວ ທ່ານສາມາດມີຄວາມເຫັນໃນນາມການຈັດຕັ້ງ ຫຼື ເປັນລາຍບຸກຄົນ ຕໍ່ກອງປະຊຸມປະເມີນຜົນການຈັດຕັ້ງປະຕິບັດລັດຖະທຳມະນູນ ປີ 2015 ຫຼື ເປັນລາຍລັກອັກສອນ ສົ່ງໃຫ້ຄະນະກຳມະການລະດັບຊາດ ປັບປຸງລັດຖະທຳມະນູນ ປີ 2015 ຕາມອີເມວ: laocon@nalao.la ຫຼື ເວບໄຊ: https://na.gov.la/

ຕ. ຄະນະປະຈຳການ ຄະນະກຳມະການລະດັບຊາດ
ປັບປຸງລັດຖະທຳມະນູນ ປີ 2015
ຜູ້ປະຈຳການ

ສຈ ປອ ຈະເລີນ ເຢຍປາວເຮີ